ຫ່ານ. ລັດຖະມົນ... 31 AUG 2010

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

--------------

ສຳນັກງານນາຍົກລັດຖະມົນຕີ

ເລກທີ 369 /ນຍ

ນະຄອນຫຼວງວຽງຈັນ,ວັນທີ 23.08.2010

**Decree on Tobacco Advertising Ban, Promotion and Sponsorship**

# ດຳລັດ

# ວ່າດ້ວຍການຫ້າມໂຄສະນາ ສົ່ງເສີມການບໍລິໂພກ ຜະລິດຕະພັນຢາສູບ

- ອີງຕາມ ກົດໝາຍວ່າດ້ວຍລັດຖະບານ ສະບັບປັບປຸງ ເລກທີ 02/ສພຊ, ລົງວັນທີ 6 ພຶດສະພາ 2003.
- ອີງຕາມ ກົດໝາຍວ່າດ້ວຍ ການອະນາໄມ, ກັນພະຍາດ ແລະ ສົ່ງເສີມສຸຂະພາບ ສະບັບເລກທີ 01/ສພຊ, ລົງວັນທີ 10 ເມສາ 2001.
- ອີງຕາມ ກົດໝາຍວ່າດ້ວຍການຄວບຄຸມຢາສູບ ສະບັບ ເລກທີ 07/ສພຊ, ລົງວັນທີ 26 ພະຈິກ 2009
- ອີງຕາມ ໜັງສືສະເໜີຂອງ ລັດຖະມົນຕີວ່າການ ກະຊວງສາທາລະນະສຸກ ສະບັບເລກທີ 584/ກຊສ, ລົງວັນທີ 30 ກໍລະກົດ 2010.

## ນາຍົກລັດຖະມົນຕີ ອອກດຳລັດ:

## ໝວດທີ 1

## ບົດບັນຍັດທົ່ວໄປ

ມາດຕາ 1. ຈຸດປະສົງ

ດຳລັດສະບັບນີ້ ກຳນົດຫລັກການ, ລະບຽບການ ແລະ ມາດຕະການກ່ຽວກັບການຫ້າມທຸກການກະທຳທີ່ເປັນການໂຄສະນາການບໍລິໂພກຜະລິດຕະພັນຢາສູບ ເພື່ອຫລຸດຜ່ອນການສູບຢາຂອງປະຊາຊົນບັນດາເຜົ່າ ແນໃສ່ປ້ອງກັນ, ສົ່ງເສີມສຸຂະພາບຂອງປະຊາຊົນໃຫ້ດີຂຶ້ນ ແລະ ໃຫ້ຮູ້ວ່າການສູບຢາ

ເປັນອັນຕະລາຍຕໍ່ສຸຂະພາບ ແລະ ມີຜົນກະທົບຕໍ່ເສດຖະກິດ ແລະ ສັງຄົມ. ສະກັດກັ້ນການຊອກຫາທຸກວິທີທາງເພື່ອໂຄສະນາປະຊາສຳພັນແກ່ມວນຊົນໃຫ້ຊົມໃຊ້ຜະລິດຕະພັນຢາສູບຂອງບຸກຄົນ ຫລື ນິຕິບຸກຄົນ.

## ມາດຕາ 2: ການຫ້າມໂຄສະນາເພື່ອສົ່ງເສີມການບໍລິໂພກຜະລິດຕະພັນຢາສູບ

ການຫ້າມໂຄສະນາ ສົ່ງເສີມ ການບໍລະໂພກຜະລິດຕະພັນຢາສູບ ແມ່ນຫ້າມການກະທຳດ້ວຍວິທີການ ແລະ ຮູບການໃດໜຶ່ງ ຊຶ່ງສະແດງອອກໃນການເຮັດໃຫ້ຄົນຫຼົງໄຫຼ, ຊວນເຊື່ອ ແລະ ຢາກລອງສຳພັດກັບຢາສູບ ໂດຍໃຊ້ຄຳເວົ້າ, ພາບບໍ່ເຄື່ອນໄຫວ, ພາບເຄື່ອນໄຫວ, ຕົວໜັງສື, ການສະແດງ, ຕະຫລອດເຖິງບຸກຄົນທີ່ມີຊື່ສຽງ ເປັນຕົວແບບໃນການໂຄສະນາ ແລະ ອື່ນໆ.

## ມາດຕາ 3: ນະໂຍບາຍຂອງລັດຖະບານ

ລັດຖະບານໃຫ້ຄວາມສຳຄັນ ແລະ ເອົາໃຈໃສ່ຕໍ່ການປ້ອງກັນ ແລະ ຮັກສາສຸຂະພາບຂອງປະຊາຊົນບັນດາເຜົ່າດ້ວຍການໃຫ້ຄວາມຮູ້, ຂໍ້ມູນຂ່າວສານ, ຊຸກຍູ້ປຸກລະດົມຂົນຂວາຍ, ຂະຫຍາຍວຽກງານອະນາໄມກັນພະຍາດ ແລະ ສົ່ງເສີມສຸຂະພາບ ທັງພາກລັດ ແລະ ເອກະຊົນ, ໃຫ້ບໍລິການທາງດ້ານສາທາລະນະສຸກຢ່າງທົ່ວເຖິງ ແລະ ມີຄຸນນະພາບ.

## ມາດຕາ 4: ວັນງົດສູບຢາແຫ່ງຊາດ

ລັດຖະບານ ແຫ່ງ ສ ປ ປ ລາວ ກຳນົດເອົາວັນທີ 31 ພຶດສະພາ ຂອງທຸກໆປີ ເປັນວັນງົດສູບຢາແຫ່ງຊາດ.

## ມາດຕາ 5: ຂອບເຂດການນຳໃຊ້ດຳລັດ

ດຳລັດສະບັບນີ້ມີຜົນໃຊ້ບັງຄັບໃນການຫ້າມໂຄສະນາເພື່ອສົ່ງເສີມການບໍລິໂພກຜະລິດຕະພັນຢາສູບໃນຂອບເຂດດິນແດນຂອງສ.ປ.ປ. ລາວ.

# ໝວດທີ II
# ການຫ້າມໂຄສະນາຂາຍຜະລິດຕະພັນຢາສູບທຸກຮູບແບບ

## ມາດຕາ 6: ຫ້າມໂຄສະນາຜ່ານສື່ມວນຊົນ

ຫ້າມໂຄສະນາຂາຍຜະລິດຕະພັນຢາສູບຜ່ານສື່ມວນຊົນທຸກປະເພດທີ່ເຄື່ອນໄຫວຢູ່ໃນສ.ປ.ປ.ລາວ ເຊັ່ນ: ສື່ສິ່ງພິມ, ສິ່ງພິມ, ສື່ທາງເອເລັກໂຕນິກ, ອິນເຕີເນັດ, ວິທະຍຸ, ໂທລະພາບ ໂດຍການສະແດງ ຊື່, ເຄື່ອງໝາຍຜະລິດຕະພັນ, ເນື້ອຄວາມຕ່າງໆຂອງຜະລິດຕະພັນຢາສູບ.

**ມາດຕາ 7:** ຫ້າມໂຄສະນາດ້ວຍວັດຖຸ, ພາຫະນະ ທີ່ຜະລິດພາຍໃນ ແລະ/ຫຼື ນຳເຂົ້າ

ຫ້າມໂຄສະນາຂາຍຜະລິດຕະພັນຢາສູບຕໍ່ຜູ້ຊົມໃຊ້ໂດຍຜ່ານການພິມ, ແຕ້ມ, ຕິດ, ແກະສະລັກເຄື່ອງໝາຍ ຂອງຜະລິດຕະພັນ ແລະ. ເນື້ອຄວາມ ຂອງຜະລິດຕະພັນຢາສູບໃສ່ໃນວັດຖຸອຸປະກອນຕ່າງໆ ເຊັ່ນ: ປ້າຍໂຄສະນາຕ່າງໆ, ຄັນຮົ່ມ, ພວງກະແຈ, ໝວກ, ເສື້ອ, ປະຕິທິນ, ຕູ້, ວັດຖຸທີ່ໃຊ້ກະແສໄຟຟ້າ ແລະ ອື່ນໆ ລວມທັງພາຫະນະທຸກຊະນິດ ທີ່ຂຶ້ນທະບຽນຢູ່ ສ.ປ.ປ.ລາວ.

**ມາດຕາ 8:** ຫ້າມໂຄສະນາໃນສະຖານທີ່

ຫ້າມໂຄສະນາຜະລິດຕະພັນຢາສູບ ໃນທຸກໆສະຖານທີ່ ບົນດິນແດນ ສ.ປ.ປ.ລາວ ໂດຍທາງກົງ ແລະ ທາງອ້ອມ ຍົກເວັ້ນຢູ່ສະຖານທີ່ວາງຈຳໜ່າຍຜະລິດຕະພັນຢາສູບຕາມຮ້ານຂາຍເຄື່ອງທົ່ວໄປ ຕົວຢ່າງ: ຕູ້ຢາ ແລະ ຄັນຮົ່ມໃຫຍ່, ປ້າຍສະແດງຕົວແທນຈຳໜ່າຍເທົ່ານັ້ນ.

**ມາດຕາ 9:** ຫ້າມໂຄສະນາຜ່ານການສະໜັບສະໜູນ

ຫ້າມໂຄສະນາຂາຍຜະລິດຕະພັນຢາສູບຜ່ານການສະໜັບສະໜູນ ຫຼື ອຸປະຖຳການແຂ່ງຂັນກິລາທຸກປະເພດ, ການສະແດງສິລະປະວັນນະຄະດີຕ່າງໆ, ການສະໜັບສະໜູນການສຶກສາ ລວມທັງການສະໜັບສະໜູນ ຈັດກິດຈະກຳອື່ນໆໃນ ສ.ປ.ປ.ລາວ.

**ມາດຕາ 10:** ມາດຕະການຈັດຕັ້ງປະຕິບັດ

10.1. ມອບໃຫ້ກະຊວງຖະແຫຼງຂ່າວ ແລະ ວັດທະນະທຳເປັນໃຈກາງປະສານງານກັບພາກສ່ວນທີ່ກ່ຽວຂ້ອງຕ່າງໆ ໃນການຄຸ້ມຄອງ ແລະ ກວດກາການໂຄສະນາຜະລິດຕະພັນຢາສູບໃນທຸກຮູບແບບຢ່າງເຂັ້ມງວດ.

10.2. ມອບໃຫ້ກະຊວງການເງິນເປັນຜູ້ຄຸ້ມຄອງ ແລະ ກວດກາ ການນຳເຂົ້າຜະລິດຕະພັນສິ່ງພິມທຸກຊະນິດ ແລະ ວັດຖຸອຸປະກອນຕ່າງໆ ທີ່ຮັບໃຊ້ການໂຄສະນາຂາຍຜະລິດຕະພັນຢາສູບຢ່າງເຂັ້ມງວດໃນດ່ານນຳເຂົ້າທົ່ວປະເທດ. ໃນກໍລະນີຫາກພົບເຫັນຜະລິດຕະພັນສິ່ງພິມ ແລະ ວັດຖຸອຸປະກອນດັ່ງກ່າວນີ້ໃຫ້ຍຶດເປັນຂອງລັດ ແລະ ປັບໃໝ ຕາມລະບຽບກົດໝາຍ.

10.3. ມອບໃຫ້ກະຊວງອຸດສາຫະກຳ ແລະ ການຄ້າ ຄຸ້ມຄອງ ແລະ ກວດກາການຜະລິດ, ການນຳເຂົ້າ ແລະ ການຈຳໜ່າຍຜະລິດຕະພັນຢາສູບຢູ່ພາຍໃນປະເທດ ແລະ ສົ່ງເສີມການສົ່ງອອກ ເປັນຕົ້ນຕໍ.

10.4. ມອບໃຫ້ກະຊວງສາທາລະນະສຸກຄຸ້ມຄອງ ກວດກາ ປະເມີນຜົນກ່ຽວກັບຜົນກະທົບຂອງການສູບຢາຕໍ່ສຸຂະພາບຂອງພົນລະເມືອງ ແລະ ໃຫ້ຄວາມຮູ້ກ່ຽວກັບຜົນຮ້າຍຂອງການສູບຢາໃຫ້ແກ່ປະຊາຊົນຢ່າງທົ່ວເຖິງ ເພື່ອປ້ອງກັນສຸຂະພາບດ້ວຍການຫຼຸດຜ່ອນການສູບຢາ ແລະ ກ້າວໄປເຖິງການອອກສູບຢາຢ່າງ ສິ້ນເຊີງ.

10.5. ບຸກຄົນ, ນິຕິບຸກຄົນ ແລະ ອົງການຈັດຕັ້ງຕ່າງໆ ຫາກບໍ່ປະຕິບັດຕາມດຳລັດສະບັບນີ້ ຈະຖືກເຈົ້າໜ້າທີ່ຜູ້ຮັບຜິດຊອບໃນການຄຸ້ມຄອງ ກວດກາ ປະຕິບັດມາດຕະການຕາມພາລະບົດບາດ ແລະ ຂອບເຂດສິດຂອງຕົນ ດ້ວຍການກ່າວເຕືອນ, ສຶກສາອົບຮົມ, ຖອນໃບອະນຸຍາດດຳເນີນກິດຈະການ, ຍຶດ, ຮິບ, ປັບໃໝ ແລະ ລົງໂທດ ຕາມກໍລະນີເບົາ ຫລື ໜັກ.

## ໝວດທີ III

## ບົດບັນຍັດສຸດທ້າຍ

**ມາດຕາ 11: ການຈັດຕັ້ງປະຕິບັດ**

ອົງການຈັດຕັ້ງຂອງລັດ, ລວມໝູ່, ບຸກຄົນ, ນິຕິບຸກຄົນ, ໂຮງຈັກໂຮງງານ, ຕົວແທນຈຳໜ່າຍ, ອົງການຈັດຕັ້ງຕ່າງໆທີ່ເຄື່ອນໄຫວຢູ່ ສ.ປ.ປ.ລາວ ຕ້ອງປະຕິບັດຕາມດຳລັດສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 12: ຜົນສັກສິດ**

ດຳລັດສະບັບນີ້ມີຜົນສັກສິດບັງຄັບໃຊ້ພາຍຫຼັງ 90 ວັນ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ. ຂໍ້ກຳນົດ, ບົດບັນຍັດໃດທີ່ຂັດກັບເນື້ອໃນຂອງດຳລັດສະບັບນີ້ລ້ວນແຕ່ຖືກຍົກເລີກ.

ນາຍົກລັດຖະມົນຕີແຫ່ງ ສ ປ ປ ລາວ

ບົວສອນ ບຸບຜາວັນ